ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ 018 /ທຄຕລ

ນະຄອນຫຼວງວຽງຈັນ, ວັນທີ 28 FEB 2020

# ໜັງສືແຈ້ງເຊີນ

**ຮຽນ**: ບັນດາທ່ານຫົວໜ້າບໍລິສັດ, ຫ້າງຮ້ານ ທີ່ເປັນຕົວແທນຢູ່ໃນນະຄອນຫຼວງວຽງຈັນ.

**ເລື່ອງ**: ຂໍເຊີນເຂົ້ານຳສະເໜີ ເຄື່ອງຈັກນັບ-ຄັດໄຈ້-ກວດເງິນປອມ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານ ຜູ້ອຳນວຍການບໍລິສັດ, ຜູ້ສະໜອງເຄື່ອງຈັກ ຊາບວ່າ: ປະຈຸບັນທາງທະນາຄານມີຄວາມຕ້ອງການ ເຄື່ອງຈັກທີ່ສາມາດ: ນັບເງິນ-ຄັດໄຈ້ເງິນ-ກວດເງິນປອມໄດ້ຫຼາຍສະກຸນ ເພື່ອນຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງທະນາຄານ, ເຊິ່ງມີເງື່ອນໄຂດັ່ງລຸ່ມນີ້:

1. ເຄື່ອງຈັກນັບ-ຄັດໄຈ້ເງິນ ທີ່ສາມາດກວດເງິນປອມໄດ້ຫຼາຍສະກຸນ ລຸ້ນ 2 ຊ່ອງ, 3 ຊ່ອງ, 4 ຊ່ອງ, 8 ຊ່ອງ ແລະ ລຸ້ນອື່ນໆ ໂດຍນຳສະເໜີຍີ່ຫໍ້-ປະເພດ ທີ່ບໍລິສັດທ່ານສາມາດສະໜອງໄດ້ ແລະ ໃຫ້ນຳເຄື່ອງຈັກຕົວຈິງມານຳສະເໜີພ້ອມ (ຖ້າມີ).
2. ຕ້ອງເປັນບໍລິສັດທີ່ດຳເນີນທຸລະກິດທີ່ສະໜອງອຸປະກອນປະເພດເຄື່ອງຈັກສະເພາະ ຕາມການອອກອະນຸຍາດຂອງກະຊວງ/ພະແນກອຸດສາຫະກຳ-ການຄ້າ, ພ້ອມທັງສຳເນົາໃບອະນຸຍາດດຳເນີນທຸລະກິດ ແລະ ໃບຢັ້ງຢືນການມອບພັນທະອາກອນປີລ່າສຸດມາພ້ອມ.
3. ມີໃບຢັ້ງຢືນການເປັນຕົວແທນຈຳໜ່າຍ (ຍີ່ຫໍ້ທີ່ຕົນຂາຍ) ຈາກບໍລິສັດຜູ້ຜະລິດ ຫຼື ຜູ້ສະໜອງຕ່າງປະເທດ.
4. ມີຊ່ຽວຊານ / ພະນັກງານສ້ອມແປງທີ່ສຳນານງານ ແລະ ມີປະສົບການຫຼາຍປີ ປະຈຳຢູ່ບໍລິສັດ.
5. ບໍລິສັດຕ້ອງເຂົ້າມານຳສະເໜີໃນວັນທີ 10/03/2020 ທີ່ຕຶກ ທຄຕລ ສຳນັກງານໃຫຍ່ ຫ້ອງປະຊຸມຊັ້ນ 5C ເພື່ອໃຫ້ທາງ ທຄຕລ ຮັບຊາບລາຍລະອຽດກ່ຽວກັບ: ຜົນງານການສະໜອງເຄື່ອງຈັກ, ປະສົບການການໃຫ້ບໍລິການ, ຄຸນສົມບັດຂອງເຄື່ອງຈັກ, ເງື່ອນໄຂການຊຳລະ, ກຳນົດເວລາສົ່ງເຄື່ອງ, ການຮັບປະກັນສິນຄ້າ, ການບຳລຸງຮັກສາ, ການບໍລິການຫຼັງການຂາຍ, ການຮັບປະກັນການເຄຼມຄືນ ໃນກໍລະນີທີ່ເງິນປອມສາມາດຜ່ານໄດ້ (ຖ້າມີ) ແລະ ເງື່ອນໄຂອື່ນໆຢ່າງລະອຽດ.

ດັ່ງນັ້ນ ຈຶ່ງແຈ້ງເຊີນມາຍັງທ່ານເພື່ອຮັບຊາບ ແລະ ທ່ານໃດທີ່ມີຄວາມສົນໃຈ ແມ່ນໃຫ້ແຈ້ງເຈດຈຳນົງການເຂົ້ານຳສະເໜີກ່ອນວັນທີ 05/03/2020 ດ້ວຍ.

ຮ ຜູ້ອຳນວຍການ
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ແຂວງ ນະຄອນ ຫລວງ

ສຸພັກ ຖິ່ນໄຊພອນ

ຕິດຕໍ່ພົວພັນ:

ທ່ານ ທິບພະຈັນ ໄຊຍະເສນ 2222 1216
ນ. ວັນນິນາ ລຳຳຈັນ 5933 3349